ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ

ກົມອາຊີວະສຶກສາ ເລກທີ 607/ອສ

ນະຄອນຫຼວງວຽງຈັນ, ວັນທີ 22 ມີນາ 2024

# ຫນັງສືແຈ້ງເຊີນປະມູນ

**ເຊີນເຂົ້າຮ່ວມການປະມູນວັນທີ**: 22 ມີນາ 2024

**ຊື່ໂຄງການ**: ໂຄງການເສີມສ້າງທັກສະທີ່ເປັນບູລະມະສິດສໍາລັບການເຕີບໂຕ ຂອງ ສປປ ລາວ (Lao PSG)

**ທຶນກູ້ຢືມເລກທີ**: ທະນາຄານໂລກອານຸມັດເລກທີ: (IDA Credit 7042-LA)

**ຊື່ສັນຍາ**:ການກໍ່ສ້າງ ແລະ ສ້ອມແປງອາຄານຮຽນ ໃຫ້ ວິທະຍາໄລເຕັກວິຊາຊີບ ແບບປະສົມ ແຂວງຊຽງຂວາງ,ໂຮງຮຽນ ເຕັກວິຊາຊີບ ແບບປະສົມ ແຂວງເຊກອງ ແລະ ວິທະຍາໄລເຕັກກະສິກຳດົງຄຳຊ້າງ

**ລະຫັດສັນຍາເລກທີ**: C1.2-CW-3, C1.2-CW-4 ແລະ C1.2-CW-5

**ວັນປິດຮັບຮອງປະມູນ**: 23 ເມສາ 2024, ເວລາ 13:30.

1. ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ຮັບໄດ້ຮັບທຶນກູ້ຢືມຈາກທະນາຄານໂລກ (The World Bank) ເພື່ອໃຊ້ຈ່າຍສໍາລັບໂຄງການເສີມສ້າງທັກສະທີ່ເປັນບູລະມະສິດສໍາລັບການເຕີບໂຕຂອງ ສປປ ລາວ (Lao PSG) ແລະ ມີຈຸດປະສົງນໍາໃຊ້ທຶນສ່ວນໜຶ່ງເຂົ້າໃນລາຍຈ່າຍຂອງສັນຍາ ການສ້ອມແປງອາຄານຮຽນ ໃຫ້ ວິທະຍາໄລເຕັກວິຊາຊີບ ແບບປະສົມ ແຂວງຊຽງຂວາງ, ໂຮງຮຽນ ເຕັກວິຊາຊີບ ແບບປະສົມ ແຂວງເຊກອງ ແລະ ວິທະຍາໄລເຕັກກະສິກຳດົງຄຳຊ້າງ
2. ກະຊວງສຶກສາທິການ ແລະ ກິລາ, ກົມອາຊີວະສຶກສາ ຂໍຮຽນເຊີນບັນດາບໍລິສັດທີ່ມີເງື່ອນໄຂເຂົ້າຮ່ວມ ການປະມູນເປີດກວ້າງສໍາລັບໂຄງການສ້ອມແປງອາຄານຮຽນ ໃຫ້ ວິທະຍາໄລເຕັກວິຊາຊີບ ແບບປະສົມ ແຂວງຊຽງຂວາງ, ໂຮງຮຽນ ເຕັກວິຊາຊີບ ແບບປະສົມ ແຂວງເຊກອງ ແລະ ວິທະຍາໄລເຕັກກະສິກຳດົງຄຳຊ້າງ, ລາຍລະອຽດຂອງສັນຍາໄດ້ລະບຸໄວ້ດັ່ງນີ້:

| ລະຫັດສັນຍາ | ຊື່ສັນຍາ | ສະຖານທີ່ກໍ່ສ້າງ | ວັນ ແລະ ເວລາ ໃນການ ຈັດຕັ້ງປະຕິບັດໃຫ້ສໍາເລັດ |
|---|---|---|---|
| C1.2-CW-3 | ການກໍ່ສ້າງ ແລະ ສ້ອມແປງອາຄານຮຽນ ໃຫ້ວິທະຍາໄລເຕັກວິຊາຊີບ ແບບປະສົມແຂວງຊຽງຂວາງ | ວິທະຍາໄລເຕັກວິຊາຊີບ ແບບປະສົມແຂວງຊຽງຂວາງ | 12 ເດືອນ ຫຼັງ ຈາກເຊັນສັນຍາ |
| C1.2-CW-4 | ການກໍ່ສ້າງ ແລະ ການສ້ອມແປງອາຄານຮຽນ ໃຫ້ໂຮງຮຽນ ເຕັກວິຊາຊີບ ແບບປະສົມ ແຂວງເຊກອງ | ໂຮງຮຽນ ເຕັກວິຊາຊີບ ແບບປະສົມ ແຂວງເຊກອງ | 12 ເດືອນ ຫຼັງ ຈາກເຊັນສັນຍາ |

| | | | |
|---|---|---|---|
| **C1.2-CW-5** | **ການກໍ່ສ້າງ ແລະ ສ້ອມແປງອາຄານຮຽນ ສ້ອມແປງໃຫ້ ວິທະຍາໄລເຕັກນິກ ກະສິກຳດົງຄຳຊ້າງ** | **ວິທະຍາໄລເຕັກນິກ ກະສິກຳດົງຄຳຊ້າງ** | **12 ເດືອນ ຫຼັງ ຈາກເຊັນສັນຍາ** |

ເງື່ອນໄຂ ແລະ ຄຸນສົມບັດຂອງບໍລິສັດທີ່ສາມາດເຂົ້າຮ່ວມການປະມູນດັ່ງກ່າວໄດ້ກຳນົດໄວ້ໃນເອກະສານການປະມູນພາກທີ່ III

3. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງຕາມທີ່ໄດ້ລະບຸໄວ້ໃນຄູ່ມືແນະນຳ (ປື້ມຄູ່ມື) ວ່າດ້ວຍການຈັດຊື້ຂອງທະນາຄານໂລກໃຫ້ຜູ້ກູ້ຢືມ ເດືອນກໍລະກົດ ປີ 2016, ສະບັບປັບປຸງ ຕາມແຕ່ລະໄລຍະ, ເດືອນສິງຫາ 2017 ແລະ ເດືອນພະຈິກ 2020 ແລະ ເປີດໃຫ້ບໍລິສັດເຂົ້າແຂ່ງຂັນການປະມູນທຸກໆບໍລິສັດທີ່ມີຄວາມເໝາະສົມຕາມບົດແນະນຳວ່າດ້ວຍການຈັດຊື້ດັ່ງກ່າວ.
4. ບັນດາບໍລິສັດທີ່ມີຄວາມເໝາະສົມສາມາດພົວພັນເອົາຂໍ້ມູນໄດ້ທີ່ ຫ້ອງການໜ່ວຍງານປະສານງານໂຄງການ (Lao PSG), ກົມອາຊີວະສຶກສາ, ກະຊວງສຶກສາທິການ ແລະ ກິລາ ແລະ ກວດກາເອກະສານປະມູນໃນເວລາໂມງການລັດຖະການ 09 :00 ຫາ 17 :00 ວັນຈັນ ຫາ ວັນສຸກ ຕາມທີ່ຢູ່ຂ້າງລຸ່ມນີ້
5. ບັນດາບໍລິສັດທີ່ມີຄວາມເໝາະສົມສາມາດຊື້ຊອງປະມູນຄົບຊຸດເປັນພາສາອັງກິດ ໂດຍຍື່ນໜັງສືຫາຕາມທີ່ຢູ່ຂ້າງລຸ່ມນີ້ ໂດຍຈ່າຍເງິນທີ່ຈະບໍ່ສົ່ງຄືນຈຳນວນ **2.300.000** ກີບ. ວິທີຊຳລະເປັນເງິນສົດ ຫຼື ໂອນເຂົ້າບັນຊີທະນາຄານການຄ້າຕ່າງປະເທດລາວມະຫາຊົນບັນຊີເລກທີ:**0101-2000-0005-2920-01**.ສ່ວນເອກະສານການປະມູນສາມາດພົວພັນເອົາໂດຍບຸກຄົນຫຼືສົ່ງທາງໄປສະນີຖ້າຫາກເປັນຄວາມຕ້ອງການຂອງບໍລິສັດແຕ່ບໍລິສັດຈະຕ້ອງໄດ້ຈ່າຍເງິນຄ່າຂົນສົ່ງເພີ່ມເຕີມ.ເອກະສານປະມູນດັ່ງກ່າວຈະຖືກສົ່ງກໍ່ຕໍ່ເມື່ອໂຄງການໄດ້ຮັບເງິນຮຽບຮ້ອຍແລ້ວ ແລະ ຈະບໍ່ຮັບຜິດຊອບໃດໆ ຖ້າຫາກເອກະສານເສຍຫາຍລະຫວ່າງການຂົນສົ່ງ ຫຼື ການຂົນສົ່ງຊ້າ. ສ່ວນຄ່າຈັດສົ່ງເພີ່ມເຕີມເອກະສານປະມູນສຳລັບພາຍໃນປະເທດ 300.000 ກີບ
6. ຊອງປະມູນຈະຕ້ອງສົ່ງຫາບ່ອນຢູ່ຂ້າງລຸ່ມນີ້ ໃນວັນທີ **23 ເມສາ 2024 ກ່ອນເວລາ** 13 :30, ການສົ່ງດ້ວຍລະບົບເອເລັກໂຕຼນິກຈະບໍ່ອະນຸຍາດ. ຊອງປະມູນທີ່ສົ່ງຊ້າຈະຖືກປະຕິເສດ ການເປີດຊອງການປະມູນຈະເປີດຕໍ່ໜ້າສາທາລະນະໂດຍຊ່ອງໜ້າຜູ່ຕາງໜ້າຂອງຜູ່ເຂົ້າແຂ່ງຂັນປະມູນທີ່ຖືກແຕ່ງຕັ້ງ ແລະ ບຸກຄົນອື່ນທີ່ສົນໃຈເຂົ້າຮ່ວມຢູ່ສະຖານທີ່ກຳນົດໄວ້ເອກະສານປະມູນ ຫ້ອງປະຊຸມກະຊວງສຶກສາທິການ ແລະ ກິລາ, ຫ້ອງ 425 ຊັ້ນ 4 **ວັນທີ : 23 ເມສາ 2024 ເວລາ** 14 :00 **ໂມງ**
7. ທຸກໆເອກະສານຈະຕ້ອງປະກອບແຈ້ງການຄ້ຳປະກັນການປະມູນ (Bid-Securing Declaration)
8. ບ່ອນຢູ່ທີ່ເວົ້າເຖິງແມ່ນ :

**ກະຊວງສຶກສາທິການ ແລະ ກິລາ, ກົມອາຊີວະສຶກສາ**

**ໂຄງການເສີມສ້າງທັກສະທີ່ເປັນບູລະມະສິດ ສຳລັບການເຕີບໂຕຂອງ ສປປ ລາວ** (Lao PSG)

**ຫ້ອງການປະສານງານໂຄງການ PCU/PSG, ຫ້ອງ 01, ຊັ້ນ 01**

**ຖະໜົນລ້ານຊ້າງ, ນະຄອນຫຼວງວຽງຈັນ, ສປປ ລາວ**

**ໂທລະສັບ : (856-21) 254438, Fax, (856-21) 254438,**

**ອີເມວ: thamaxard@gmail.com** saythonginsarn@gmail.com

ຫົວໜ້າກົມອາຊີວະສຶກສາ

ຫົວໜ້າໂຄງການ Lao PSG

ໜູພັນ ອຸດສາ